ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ປປທ

ລົງວັນທີ 7 ຕຸລາ 2009

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການສ້າງ, ການເຂົ້າຮ່ວມເປັນພາຄີ

ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ

------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີຕ 56/ຄປຈ, ລົງວັນທີ 01 ກັນຍາ 2009.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ລັດຖະບັນຍັດສະບັບນີ້ ກຳນົດຫຼັກການ ແລະລະບຽບການກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ເພື່ອໃຫ້ການຄຸ້ມຄອງ ແລະ ການນຳໃຊ້ສົນທິສັນຍາສາກົນ ຖືກຕ້ອງຕາມຈຸດປະສົງ ແລະ ເປັນເອກະພາບກັນໃນທົ່ວປະເທດ, ແນໃສ່ປະຕິບັດນະໂຍບາຍສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ຮັບປະກັນການປະຕິບັດພັນທະ, ສິດ ແລະ ຜົນປະໂຫຍດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເສີມຂະຫຍາຍບົດບາດຂອງລັດ ໃນການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ຢ່າງມີປະສິດທິຜົນ.